# ປະຫວັດພຣະທາດຫຼວງ

ທາດຫຼວງວຽງຈັນ ແມ່ນປູຊະນີຍະສະຖານທີ່ສຳຄັນແຫ່ງນຶ່ງຂອງຊາດລາວເຮົາ. ຕາມປະວັດສາດກ່າວໄວ້ວ່າ ເມື່ອບຸລີຈັນ ໄດ້ເປັນເຈົ້າເມືອງປົກຄອງນະຄອນວຽງຈັນແລ້ວ ເພິ່ນໄດ້ພາປະຊາຊົນສ້າງວັດຂຶ້ນແຫ່ງນຶ່ງຊື່ວ່າ ວັດສວນອ່ອຍລ່ອຍ ແລະສ້າງວິຫານຢູ່ທິດໃຕ້ ນຶ່ງ ຫຼັງ, ທິດ ເໜືອ ນຶ່ງ ຫຼັງໃຫ້ແກ່ພຣະອໍລະຫັນ ສອງ ອົງ.

ໃນເວລາຕໍ່ມາພຣະອໍລະຫັນທີ່ມີຊື່ວ່າ ພຣະມະຫາພຸທວົງ ໄດ້ນຳເອົາພຣະບໍລົມມະທາດຂອງພຣະພຸທເຈົ້າ ມາຈາກເມືອງລາຊະຄຶ ປະເທດອິນເດັຍມາໄວ້ໃນວັດດັ່ງກ່າວ. ການບັນຈຸພຣະບໍຣົມມະທາດນີ້ພຣະເຈົ້າຈັນທະບຸຣີປະສິທິສັກ (ບຸລີຈັນ ) ເຈົ້ານະຄອນວຽງຈັນໄດ້ເປັນປະທານ. ເພິ່ນໃຫ້ປະຊາຊົນກໍ່ອຸມົງຫີນ ສີ່ ດ້ານກວມພຣະບໍລົມມະທາດນີ້ໄວ້. ອຸມົງແຕ່ລະດ້ານກວ້າງຫ້າວາ, ໜາສອງວາ ແລະສູງ ສີ່ວາກັບສາມສອກ.

ປີ ຄ. ສ. 1560 ພຣະເຈົ້າໄຊຍະເສດຖາທິລາດໄດ້ຍ້າຍນະຄອນຫຼວງຈາກຫຼວງພຣະບາງມາຢູ່ວຽງຈັນ ແລະ ໃສ່ຊື່ວ່າ ນະຄອນຈັນທະບູລີສີສັຕະນາຄະນະຫຸດອຸຕະມະລາຊະນີ. ໃນປີ 1566 ພຣະອົງຈຶ່ງໄດ້ນຳພາປະຊາຊົນສ້າງທາດຫຼວງນີ້ຂຶ້ນ ໂດຍກໍ່ກວມເອົາພຣະທາດເກົ່າ ທີ່ມີມາແຕ່ບູຮານແລ້ວ. ໃນການສ້າງພຣະທາດໃໝ່ກວມເອົາພຣະທາດເກົ່ານີ້ ເພິ່ນໄດ້ສ້າງພຣະທາດນ້ອຍອ້ອມ ສາມສິບ ລູກ ເຊິ່ງໝາຍເຖິງການບຳເພັນຄວາມດີຂອງພຣະພຸທເຈົ້າ.

ສ່ວນທີ່ນຶ່ງ ແມ່ນຕີນທາດມີຫໍໄຫວ້ຢູ່ທັງ ສີ່ ດ້ານ ແຕ່ລະດ້ານກວ້າງ ຫົກສິບແປດແມັດ.

ສ່ວນທີ່ສອງ ຖັດຂຶ້ນໄປແມ່ນຮູບດອກບົວໃຫຍ່ອ້ອມທັງສີ່ດ້ານ ກວ້າງດ້ານລະສີ່ສິບແປດແມັດ.

ສ່ວນທີ່ສາມຖັດຂຶ້ນໄປອີກ ແມ່ນຮູບກົ່ງຄືໝາກໂມຕັດເຄິ່ງ ຫຼື ໂອຂວ້ຳໄວ້ ແຕ່ລະດ້ານກວ້າງສາມສິບ ແມັດ. ສ່ວນເທິງຕໍ່ຈາກນີ້ ເປັນຮູບດວງປີ ແລະ ເທິງດວງປີເປັນຮູບເສດຕະສັດ ອັນເປັນຍອດຂອງພຣະທາດ. ຄວາມສູງຂອງທາດມີຢູ່ ສີ່ສິບຫ້າ ແມັດ.

ເມື່ອສ້າງທາດສຳເຣັດແລ້ວ ພຣະເຈົ້າໄຊເສດຖາທິຣາດໄດ້ໃສ່ຊື່ວ່າ ເຈດີໂລກະຈຸລາມະນີ ທຸກວັນນີ້ເຮົາເອີ້ນວ່າ ທາດຫຼວງ ເຊິ່ງໝາຍຄວາມວ່າທາດໃຫຍ່.